**ມິຊຊາອາທິດທີ 29 ກຳນົດທຳມະດາປີ C**

**ວັນທີ 20 ຕຸລາ 2019**



**ພຣະວໍລະສານໂດຍນັກບຸນລູກາ 18, 1-8**

ໃນເວລານັ້ນ, ພຣະເຢຊູເຈົ້າຍັງກ່າວຄວາມປຽບທຽບໃຫ້ພວກສາວົກຟັງ ເພື່ອໃຫ້ເຂົາເຂົ້າໃຈເຖິງຄວາມຈຳເປັນທີ່ຈະຕ້ອງສວດພາວະນາຢ່າງບໍ່ຢຸດບໍ່ຖອຍວ່າ: ຢູ່ໃນເມືອງໜຶ່ງ, ມີຕຸລາການທີ່ບໍ່ຢ້ານພຣະເຈົ້າແລະບໍ່ຈຽມມະນຸດ. ແລະຢູ່ໃນເມືອງດຽວກັນນັ້ນກໍມີນາງໝ້າຍຜູ້ໜຶ່ງດ້ວຍ. ນາງມາວອນຂໍນຳຕຸລາການວ່າ: ຂໍທ່ານຕັດສິນຄວາມກັບຄູ່ຄະດີໃຫ້ຂ້ານ້ອຍດ້ວຍ. ຕຸລາການນັ້ນກໍເສີຍໄປເປັນເວລາດົນນານ. ແຕ່ທ້າຍສຸດ, ເພິ່ນຄິດວ່າ: ແມ່ນເຮົາບໍ່ຢ້ານພຣະເຈົ້າແລະບໍ່ຈຽມມະນຸດ ແຕ່ນາງໝ້າຍນີ້ມາລົບກວນເຮົາຢູ່ບໍ່ເຊົາ, ເຮົາຕ້ອງຕັດສິນຄວາມໃຫ້ເຂົາເສຍເພື່ອບໍ່ໃຫ້ເຂົາມາກຸກວນເຮົາອີກ.

ພຣະເຢຊູເຈົ້າຊົງກ່າວຊ້ຳວ່າ: ຈົ່ງຟັງຄວາມເວົ້າຂອງຕຸລາການຜູ້ອະທັມນັ້ນໃຫ້ດີ! ສ່ວນພຣະເຈົ້າ, ພຣະອົງຈະບໍ່ໃຫ້ຄວາມເປັນທັມແກ່ບັນດາຜູ້ເລືອກສັນທີ່ຮ້ອງຫາພຣະອົງທັງເວັນທັງຄືນບໍ? ພຣະອົງຍັງຈະໃຫ້ພວກເຂົາຄອງຖ້າຢູ່ບໍ? ເຮົາບອກພວກເຈົ້າວ່າ: ພຣະອົງຈະໃຫ້ຄວາມເປັນທັມແກ່ເຂົາໂດຍໄວ.

ແຕ່ເມື່ອບຸດມະນຸດຈະສະເດັດກັບມາ, ພຣະອົງຍັງຈະເຫັນຄວາມເຊື່ອຢູ່ໃນໂລກອີກບໍ?

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 18, 1-8**

ຖ້າພວກເຮົາມີຄວາມຈຳດີ, ສອງອາທິດກ່ອນພວກສາວົກໄດ້ເວົ້າກັບພຣະເຢຊູເຈົ້າວ່າ: « ໂຜດໃຫ້ພວກຂ້ານ້ອຍມີຄວາມເຊື່ອທະວີຂຶ້ນເຖີດ ». ໝາຍຄວາມວ່າພວກສາວົກກຳລັງທໍ້ຖອຍແລະຂາດຄວາມເຊື່ອໃນພຣະເຢຊູ, ພຣະອາຈານຂອງພວກເຂົາ. ຍ້ອນຫຍັງ? ອາດຈະແມ່ນຍ້ອນພວກເຂົາພ້ອມກັບພຣະເຢຊູເຈົ້າກຳລັງມຸ່ງສູ່ນະຄອນເຢລູຊາແລມບ່ອນທີ່ພຣະອົງຈະຕ້ອງຮັບທໍລະມານແລະຕາຍ. ດ້ວຍເຫດນີ້ພວກສາວົກຈຶ່ງສິ້ນຫວັງຍ້ອນພວກເຂົາບໍ່ເຂົ້າໃຈໃນຄຳສອນແລະສິ່ງທີ່ຈະເປັນມາກ່ຽວກັບພຣະອົງ.

ສ່ວນອາທິດທີ່ຜ່ານມາ, ພວກເຮົາກໍໄດ້ຟັງຄຳວອນຂໍຂອງຄົນຂີ້ທູດສິບຄົນທີ່ຮ້ອງຫາພຣະເຢຊູເຈົ້າວ່າ: « ໂອພຣະເຢຊູ, ພຣະອາຈານເຈົ້າ! ຂໍເມດຕາພວກຂ້ານ້ອຍທ້ອນ! » ເປັນຄຳຮ້ອງຂໍທີ່ເຕັມດ້ວຍຄວາມໄວ້ໃຈໃນຜູ້ທີ່ຊື່ວ່າເຢຊູ. ແລະຄວາມເຊື່ອນີ້ກໍທຳໃຫ້ພວກເຂົາຫາຍດີຈາກພະຍາດຂີ້ທູດ.

ວັນອາທິດນີ້, ພຣະເຢຊູເຈົ້າກໍສືບຕໍ່ບອກສອນພວກສາວົກໃຫ້ເຂົ້າໃຈເຖິງຄວາມຈຳເປັນແລະຕ້ອງມີຄວາມພຽນໃນຄຳພາວະນາ. ອາໄສຄວາມພຽນນີ້ຈະທຳໃຫ້ຜູ້ທີ່ພວກເຂົາວອນຂໍໃຈອ່ອນແລະກັບມາຊ່ວຍພວກເຂົາ. ດັ່ງຄວາມປຽບທຽບທີ່ພຣະເຢຊູເຈົ້າໃຊ້ວັນນີ້ຄື: ຕຸລາການຜູ້ໜຶ່ງທີ່ມີໃຈແຂງກະດ້າງ ຍ້ອນເຂົາບໍ່ຢ້ານພຣະເຈົ້າແລະບໍ່ຈູມມະນຸດ. ຄຽງຂ້າງກັບຕຸລາການນີ້ແມ່ນນາງໝ້າຍຜູ້ໜຶ່ງທີ່ມາວອນຂໍຄວາມຍຸດຕິທັມຈາກຕຸລາການ.

ກ່ອນອື່ນໝົດ, ສິ່ງທີ່ພວກເຮົາສັງເກດໄດ້ຄືຄວາມແຕກຕ່າງລະຫວ່າງບຸກຄົນທັງສອງນີ້. ຕຸລາການເປັນຜູ້ມີບົດບາດແລະຖານະໃນສັງຄົມ. ເຂົາອາດມີພຽງພໍທຸກຢ່າງແລະບໍ່ຕ້ອງການຄວາມຊ່ວຍເຫລືອຈາກຄົນອື່ນ. ສ່ວນນາງໝ້າຍ, ເປັນຜູ້ທີ່ບໍ່ມີສິດມີສຽງຫຍັງໃນສັງຄົມແລະເປັນຕົ້ນນາງໄດ້ສູນເສຍສາມີຜູ້ເປັນເສົາຄໍ້າໃນຊີວິດຂອງນາງ. ດັ່ງນັ້ນ, ນາງຈຶ່ງຕ້ອງການຄວາມຊ່ວຍເຫລືອຈາກຄົນອື່ນແລະເປັນຕົ້ນຈາກຜູ້ມີອຳນາດຄືຕຸລາການຜູ້ນີ້ເພື່ອຕັດສິນຄວາມໃຫ້ນາງ. ພວກເຮົາບໍ່ຮູ້ວ່າຄະດີຄວາມທີ່ນາງໝ້າຍນີ້ວອນຂໍໃຫ້ຕຸລາການຕັດສິນນັ້ນແມ່ນຫຍັງ? ຍ້ອນຜູ້ຂຽນພຣະວໍລະສານບໍ່ໄດ້ເລົ່າລະອຽດໃຫ້ພວກເຮົາຮູ້ຈັກ. ແຕ່ສິ່ງທີ່ພວກເຮົາຮູ້ຄືນາງໝ້າຍນີ້ບໍ່ສິ້ນຫວັງແລະບໍ່ທໍ້ຖອຍທີ່ຈະວອນຂໍຄວາມຊ່ວຍເຫລືອຈາກຕຸລາການ. ທ້າຍສຸດ, ຄວາມພະຍາຍາມແລະພາກພຽນຂອງນາງກໍທຳໃຫ້ຕຸລາການນີ້ຄິດໄດ້, ໃຈອ່ອນແລະຫັນມາຊ່ວຍເຫລືອນາງ.

ຖ້າຕຸລາການຜູ້ເປັນມະນຸດຫາກຍັງມີຄວາມເອັນດູສົງສານແລະຊ່ວຍເຫລືອນາງໝ້າຍທີ່ຕໍ່ານ້ອຍນີ້ແລ້ວ, ພຣະບິດາຂອງພວກເຮົາຜູ້ຢູ່ສະຫວັນຈະບໍ່ຮັບຟັງຄຳວອນຂໍຂອງພວກເຮົາຜູ້ເປັນລູກຂອງພຣະອົງບໍ? ແນ່ນອນ, ພຣະອົງຈະສະດັບຟັງແລະເມດຕາພວກເຮົາສະເໝີ. ແຕ່ພວກເຮົາຈະມີຄວາມພຽນແລະເຊື່ອໝັ້ນໃນພຣະອົງບໍ? ດັ່ງທີ່ພຣະເຢຊູເຈົ້າກ່າວໃນຕອນທ້າຍຂອງພຣະວໍລະສານວັນນີ້: « ເມື່ອບຸດມະນຸດຈະສະເດັດກັບມາ, ພຣະອົງຍັງຈະເຫັນຄວາມເຊື່ອຢູ່ໃນໂລກອີກບໍ? ». ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ